ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຄະນະກຳມະການຄຸ້ມຄອງແຫ່ງຊາດ
ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ
ທີ່ຕົກຄ້າງຢູ່ ສປປ ລາວ

ເລກທີ: 330 /ຄຊກລ.ຫກ
ນະຄອນຫຼວງວຽງຈັນ, ວັນທີ: 13 NOV 2017

ບົດບັນທຶກກອງປະຊຸມປຶກສາຫາລື
ການສ້າງແຜນການວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກ ປີ 2018

I. ກອງປະຊຸມປຶກສາຫາລືການສ້າງແຜນການ ວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກ ປີ 2018 ໄດ້ດຳເນີນເປັນເວລາ 2 ວັນ (ວັນທີ 25 ແລະ 26 ຕຸລາ 2017) ທີ່ສູນຮ່ວມມືສາກົນ ແລະ ເຝິກອົບຮົມ, ຫຼັກ 5 ນະຄອນຫຼວງວຽງຈັນ. ກອງປະຊຸມດຳເນີນໂດຍການເປັນປະທານຂອງທ່ານ ພູຂຽວ ຈັນທະສົມບູນ ຫົວໜ້າຫ້ອງການ ຄຊກລ ແລະ ຜູ້ເຂົ້າຈາກພາກສ່ວນກ່ຽວຂ້ອງຂອງ 13 ແຂວງ, ຕາງໜ້າກະຊວງອ້ອມຂ້າງ, ອົງການປະຕິບັດງານແກ້ໄຂ ລບຕ ຂອງລາວ ແລະ ຕ່າງປະເທດ. ນອກນີ້ ກໍ່ຍັງມີຕາງໜ້າບັນດາປະເທດຜູ້ໃຫ້ທຶນຈຳນວນໜຶ່ງເຂົ້າຮ່ວມ. (ມີບັນຊີຜູ້ເຂົ້າຮ່ວມຕິດຄັດ)

## II. ບັນຫາທີ່ໄດ້ນຳມາປຶກສາໃນຂອງກອງປະຊຸມ.

1. ທ່ານ ບຸນເພັງ ສີສະຫວັດ ຮອງຫົວໜ້າຫ້ອງການ ຄຊກລ ໄດ້ນຳສະເໜີກ່ຽວກັບ ສະພາບການຈັດຕັ້ງປະຕິບັດໂຄງການ, ການຮ່ວມມື, ການພົວພັນປະສານງານ ແລະ ສະພາບທຶນຂອງຂະແໜງການແກ້ໄຂບັນຫາ ລບຕ ໃນໄລຍະຜ່ານມາ ແລະ ທິດທາງແຜນຕໍ່ໜ້າ,

2. ທ່ານ ນາງ ສີສະຫວັນ ຄຳມຸງຄຸນ ຫົວໜ້າໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຫ້ອງການ ຄຊກລ ໄດ້ນຳສະເໜີແຜນຂອງວຽກງານ ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ສຳລັບປີ 2018,

3. ທ່ານ ບຸນຕາວ ຈັນທະວົງສາ ຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ ຫ້ອງການ ຄຊກລ ນຳສະເໜີກ່ຽວກັບແຜນປີ 2018,

4. ທ່ານ ພົມມະຈັນ ຄຳມະນີຈັນ ຫົວໜ້າໜ່ວຍງານກວດກູ້ ຫ້ອງການ ຄຊກລ ໄດ້ນຳສະເໜີລາຍງານກ່ຽວກັບວຽກງານສຳຫຼວດ ແລະ ກວດກູ້,

5. ບັນດາອົງການປະຕິບັດງານ (ຄກລ, ອົງການ ແມັກ, ອົງການ ເອັນພີເອ, ອົງການ ແຮນດີແຄັບສາກົນ ແລະ ອົງການ ຮາໂລ ທຣາດ) ໄດ້ນຳສະເໜີໂຄງການສຳຫຼວດ ແລະ ກວດກູ້ ລບຕ ສຳລັບປີ 2018.

## III. ການປະກອບຄຳເຫັນ

1. ຕາງໜ້າຈາກແຂວງສະຫວັນນະເຂດ, ຄຳມ່ວນ, ຊຽງຂວາງ, ຜົ້ງສາລີ, ສາລະວັນ ແລະ ຈຳປາສັກ ມີຄຳເຫັນດັ່ງລຸ່ມນີ້:

- ວຽກງານສຶກສາຄວາມສ່ຽງໄພຈາກ ລບຕ ນີ້ກໍ່ເປັນວຽກທີ່ຍັງມີຄວາມຈຳເປັນຫຼາຍ, ວຽກນີ້ເປັນວຽກທີ່ໂຄ

ບ້ານສີສັງວອນ, ເມືອງໄຊເສດຖາ, ຕູ້ໄປສະນີ 7261, ນະຄອນຫຼວງວຽງຈັນ
ໂທ:(856-21)262386, ແຟັກ: (856-21)262396,ທີ່ຢູ່ອີເມວ : uxo.nra@gmail.com, ເວັບໄຊທ໌: www.nra.gov.la

ສະນາສະເພາະພື້ນທີ່ ແຕ່ຢາກໃຫ້ເຮັດພື້ນທີ່ທີ່ມີຄວາມສ່ຽງຕໍ່ ລຕບ ໃນເຂດການລົງທຶນຂອງເອກະຊົນພ້ອມ.

- ການສຳຫຼວດ ແລະ ກວດກູ້ ໃນເຂດການລົງທຶນພາຍໃນ ແລະ ຕ່າງປະເທດ ກໍຍັງເຫັນວ່າບໍ່ໄດ້ປະຕິບັດເທົ່າທີ່ຄວນ. ການປະຕິບັດໂຄງການສ່ວນໃຫຍ່ ກໍໄດ້ນຳໃຊ້ແຮງງານລາວ ເຫັນວ່າມີຄວາມສ່ຽງ. ສະນັ້ນ, ບັນດາໂຄງການເຫຼົ່ານີ້ກໍ່ຄວນມີການສຳຫຼວດ ແລະ ກວດກູ້ ລບຕ ເສຍກ່ອນ.

- ວຽກງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ ສະເໜີໃຫ້ສຳຫຼວດຄຳເຫັນຂອງປະຊາຊົນ, ໃຫ້ວິເຄາະວິໄຈຄືນ ວ່າແທດເໝາະກັບສະພາບການດຳລົງຊີວິດຕົວຈິງຂອງເຂົາເຈົ້າ ຫຼື ບໍ່.

- ພາຫະນະອຸປະກອນຮັບໃຊ້ໂຄງການທີ່ໝົດອາຍຸການ ຫຼື ໝົດໂຄງການ ກໍ່ຄວນມອບໃຫ້ລັດຖະບານເພື່ອຮັບໃຊ້ວຽກງານຂອງລັດຕໍ່ໄປ.

- ຄວນລະດົມທຶນເພື່ອສ້າງຫໍພິພິດທະພັນເກັບມ້ຽນວັດຖຸສິ່ງເສດເຫຼືອສົງຄາມ ເພື່ອໃຫ້ຄົນລຸ້ນຫຼັງໄດ້ສຶກສາ.

- ຄວນມີວິທີການຊຸກຍູ້ໃຫ້ບັນດາໂຄງການລົງທຶນຂຶ້ນແຜນສຳຫຼວດ ແລະ ກວດກູ້ ລບຕ ກ່ອນປະຕິບັດໂຄງການເພື່ອໃຫ້ມີຄວາມປອດໄພຫຼາຍຂຶ້ນ.

- ໃຫ້ເຮັດການກວດກູ້ ລບຕ ຄວບຄູ່ໄປກັບການສຳຫຼວດ ລບຕ.

- ວຽກປະສານງານ ນອກຈາກປະກອບອຸປະກອນ ແລະ ເຝິກອົບຮົມແລ້ວ, ສະເໜີໃຫ້ຈັດສັນງົບປະມານ ສຳລັບການຈັດປະຊຸມທ້ອງຖິ່ນ, ເພື່ອເຜີຍແຜ່ ແລະ ສ້າງແຜນຂັ້ນເມືອງສຳລັບປີຕໍ່ໆໄປ.

- ແຂວງທີ່ບໍ່ການສະໜັບສະໜູນທຶນຈາກສາກົນຈະເຮັດແນວໃດ, ເພາະຍັງເຫັນ ລບຕ ຈຳນວນຫຼາຍຫຼົງເຫຼືອຢູ່ ຫຼື ສະເໜີລັດຖະບານລົງທຶນເຮັດການສຳຫຼວດ ແລະ ກວດກູ້ ເລີຍຈະໄດ້ບໍ່ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈະເຮັດແນວໃດ.

2. ຜູ້ຕາງໜ້າຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີຄຳເຫັນ:

- ວຽກງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ ກໍເຫັນວ່າລະອຽດສົມຄວນ ແລະ ວຽກງານດັ່ງກ່າວກໍ່ກ່ຽວພົວພັນກັບຫຼາຍພາກສ່ວນຂອງ ຮສສ. ສະເໜີວ່າຄວນມີການປະສານງານ, ປຶກສາຫາລືລາຍລະອຽດລົງເລິກຕື່ມກ່ຽວການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ, ເພາະ ຮສສ ກໍ່ມີກົມພັດທະນາສີມືແຮງງານໃຫ້ແກ່ບັນດາຜູ້ຖືກເຄາະຮ້າຍຈາກ ລບຕ ຢູ່ບັນດາແຂວງ, ຊຶ່ງເປັນອີກທາງໜຶ່ງຊ່ວຍຫຼຸດຜ່ອນຕົ້ນທຶນໃນການສະໜອງວິຊາຊີບ. ນອກຈາກນັ້ນ, ຮສສ ຍັງມີສູນຜະລິດອິງຄະທຽມ ສູນ 686 ຢູ່ບ້ານເກີນ.

- ການສ້າງແຜນຂອງແຕ່ລະວຽກກໍ່ເຫັນວ່າເປັນແຜນທີ່ຍ່ອຍ ເພື່ອເປັນຂໍ້ມູນພື້ນຖານໃຫ້ກອງປະຊຸມໂຕະມົນ. ສະນັ້ນ, ຕ້ອງລົງເລິກລາຍລະອຽດກິດຈະກຳ, ແຜນງົບປະມານ ມີການຈັດສັນແບ່ງປັນວຽກລະອຽດ, ຊຶ່ງການສະເໜີໃນຕອນເຊົ້າກໍ່ຍັງບໍ່ເຫັນວ່າມີງົບປະມານ. ສະນັ້ນ, ໃຫ້ກຳນົດລະອຽດໃຫ້ສາມາດຈັດຕັ້ງປະຕິບັດໄດ້.

- ງົບປະມານສ່ວນໃຫຍ່ຂອງລັດຖະບານແມ່ນລົງທຶນໃສ່ພື້ນຖານໂຄງລ່າງ ແຕ່ງົບປະມານສຳລັບວຽກ ລບຕ ທີ່ໄດ້ຈັດສັນໃຫ້ກໍ່ປະຕິບັດບໍ່ໄດ້ດີປານໃດ ເຮັດໃຫ້ງົບປະມານຕົກໄປ, ສົກປີ 2017 ກໍ່ປະມານ 3-4 ຮ້ອຍລ້ານ, ງົບປະມານກໍ່ບໍ່ຫຼາຍ ແຕ່ຮອດປັດຈຸບັນກໍ່ຍັງບໍ່ທັນເຫັນເອກະສານພາກສ່ວນໃດຍື່ນສະເໜີ. ສຳລັບການສຳຫຼວດກວດກູ້ ບລບ ກໍມີງົບປະມານ 2,5 ຕື້ ແຕ່ກໍ່ບໍ່ແນ່ໃຈວ່າເປັນຂອງພາກສ່ວນໃດ.

3. ຕາງໜ້າກະຊວງ ສາທາລະນະສຸກ ປະກອບຄຳເຫັນ:

- ທ່ານ ທອງລິດ ສິຫາບັນດິດ ຫົວໜ້າສູນການແພດຟື້ນຟູໜ້າທີ່ການ ປະກອບຄຳເຫັນວ່າ: ທາງສູນກໍ່ໄດ້ຮ່ວມ

ກັບຫ້ອງການ ຄຊກລ ເກັບກຳຂໍ້ມູນຜູ້ປະສົບເຄາະຮ້າຍຈາກ ລບຕ ແລະ ຈາກສົງຄາມແຕ່ປີ 2006 ແລະ ສູນເອງກໍ່ໄດ້ປະຕິບັດຕາມການຊ່ວຍເຫຼືອປະສົບເຄາະຮ້າຍຈາກ ລບຕ ຕາມ 5 ເສົາຄ້ຳ. ສູນເອງໄດ້ປະຕິບັດຢູ່ເສົາຄ້ຳທີ 3 ແມ່ນການບໍລິການດ້ານການແພດຢູ່ແຂວງຫຼວງພະບາງ, ຊຽງຂວາງ, ສະຫວັນນະເຂດ, ຈຳປາສັກ ແລະ ຈະຂະຫຍາຍໄປແຂວງອຸດົມໄຊ, ນອກຈາກນີ້ ກໍ່ໄດ້ສ້າງຕັ້ງປະກັນ 30,000 ກີບ ຮັກສາສຸຂະພາບ, ສ່ວນວຽກງານປິ່ນປົວສຸກເສີນກໍ່ໄດ້ຈັດຕັ້ງປະຕິບັດເປັນປົກກະຕິ. ສຳລັບແຜນປີ 2018 ແມ່ນການບໍລິການ ໄປຕາມ 6 ແຂວງເຂດບູລິມະສິດ.

ສຳລັບການສົ່ງເສີມເສດຖະກິດໃຫ້ພວກເຂົານັ້ນ ແມ່ນໄດ້ຊ່ວຍເຝິກອາຊີບ, ຊຶ່ງມີໃບປະກາດລະດັບເຕັກນິກ ໃຫ້ວິຊາຊີບພື້ນຖານປະຖົມ ແລະ ມັດທະຍົມ, ວິຊາຊີບໃນການສ້ອມແປງລົດຈັກ ມີສູນຢູ່ແຂວງຊຽງຂວາງ, ຫລວງພະບາງ ແລະ ສະຫວັນນະເຂດ. ສ່ວນວຽກປິ່ນປົວຜູ້ປະສົມເຄາະຮ້າຍຈາກ ລບຕ ແມ່ນປະຕິບັດຕາມການສົ່ງເສີມຂອງລັດຖະບານ.

- ທ່ານ ດຣ. ມະນີວັນ ສະຫວັດດີ ຫົວໜ້າພະແນກ, ກົມປິ່ນປົວ ກະຊວງສາທາລະນະສຸກ ໄດ້ປະກອບຄຳເຫັນວ່າ: ແຕ່ກ່ອນໄດ້ເກັບກຳຂໍ້ມູນຜູ້ປະສົບເຄາະຮ້າຍສະໄຫມຂຶ້ນກັບ ຣສສ ແລະ ຕໍ່ມາກໍ່ຍ້າຍມາຂຶ້ນກັບ ຄພທສ ແລະ ການເກັບກຳຂໍ້ມູນກໍ່ຍັງບໍ່ທັນຄົບຖ້ວນ. ຕໍ່ມາປີ 2015 ໄດ້ລົງເກັບກຳຂໍ້ມູນຢູ່ເມືອງໄຊບົວທອງ ແຂວງຄຳມ່ວນ ແລະ ກໍ່ຍັງເຫັນຜູ້ປະສົບເຄາະຮ້າຍເພີ່ມ 3 ຄົນ ທີ່ຕົກການສຳຫຼວດ. ສະນັ້ນ, ສະເໜີມາຍັງແຂວງ ຊ່ວຍຕື່ມຕົວເລກໃຫ້ຄົບຖ້ວນເພື່ອເປັນບ່ອນອີງໃນການຂໍທຶນມາຊ່ວຍເຫຼືອໃຫ້ທົ່ວເຖິງ. ສ່ວນກອງທຶນຊ່ວຍເຫຼືອປະສົບເຄາະຮ້າຍ ທີ່ເປັນເຈົ້າຂອງໂຄງການ ໂດຍອົງການ ເວີນເອັດຢູເຄຊັນ ລາວ, ກໍ່ຖືວ່າຈຳກັດພຽງແຕ່ບາງແຂວງ, ແຕ່ຫາກມີຄວາມຈຳເປັນກໍ່ສາມາດຊ່ວຍເຫຼືອແຂວງອື່ນໄດ້.

ສະເໜີຕື່ມວ່າ ຕົວເລກຂອງແຂວງໄຊສົມບູນ ທີ່ຖືກແບ່ງປັນມາຈາກແຂວງຊຽງຂວາງ ແລະ ແຂວງວຽງຈັນມີທີ່ໃດກໍ່ຢາກໃຫ້ຊັດເຈນຕື່ມ.

4. ຕາງໜ້າຈາກກະຊວງປ້ອງກັນປະເທດ ໄດ້ໃຫ້ຄຳເຫັນ:

ຜ່ານການອອກຄຳເຫັນຂອງບັນດາທ່ານທີ່ເຂົ້າຮ່ວມປະຊຸມກ່ຽວກັບ ການສຳຫຼວດ ແລະ ກວດກູ້ ກໍ່ເຫັນໄດ້ວ່າຄວນເຮັດການກວດກູ້ຄວບຄູ່ກັນໄປກັບການສຳຫຼວດ ເພື່ອໃຫ້ປະຊາຊົນ ສາມາດນຳໃຊ້ທີ່ດິນດ້ວຍຄວາມສະດວກ.

5. ທ່ານ ທົບພະສອນ ສຸຂະທຳມະວົງ ຫົວໜ້າ ຄກລ ຄຳເຫັນ:

- ການສຳຫຼວດນີ້ແມ່ນໃຊ້ຫຼັກຖານດ້ານເຕັກວິທະຍາສາດມາຢັ້ງຢືນ, ຊຶ່ງບໍ່ສາມາດບິດເບື່ອຄວາມເປັນຈິງໄດ້ເຊັ່ນ: ອົງການ ເອັມພີເອ ໄດ້ເຮັດສຳຫຼວດໄປແລ້ວແຕ່ພາຍຫຼັງ ຄກລ ໄປກວດກາກໍ່ຍັງເຫັນລະເບີດຢູ່.

- ຄກລ ຢາກເປັນຫຼັກໃນການເຮັດສຳຫຼວດແຫ່ງຊາດ ຮ່ວມກັບ ໄອເອັນຈີໂອ ເພື່ອຢັ້ງຢືນຄວາມຖືກຕ້ອງ, ແຕ່ໃນການຮ່ວມມືດັ່ງກ່າວ ຄລກ ມີສິ່ງທີ່ບໍ່ສາມາດຮັບໄດ້ເຊັ່ນ: ເອົາພະນັກງານ ຄກລ ເຂົ້າເຮັດວຽກຮ່ວມນຳ ໄອເອັນຈີໂອໜ້ອຍເກີນໄປ, ຕ້ອງໄດ້ປະຕິບັດລະບຽບການຂອງ ໄອເອັນຈີໂອ, ໃຫ້ ເອັນຈີໂອ ຄຸ້ມຄອງ ທັງທີ່ ຄລກ ກໍ່ມີມາດຕະຖານການປະຕິບັດງານຢູ່ແລ້ວ, ແຕ່ເກີດກໍລະນີຜິດພາດ ຄລກ ຕ້ອງເປັນຜູ້ຮັບຜິດຊອບ.

- ຖ້າ ຄກລ ເຂົ້າຮ່ວມໃນການສຳຫຼວດຄັ້ງນີ້ ກໍ່ຈະມີຂໍ້ບົກພ່ອງຕໍ່ອຳນາດການປົກຄອງທ້ອງຖິ່ນ, ຕໍ່ລັດຖະບານເພາະຈະບໍ່ສາມາດກວດການຄຸນນະພາບ ຢັ້ງຢືນຄວາມຖືກຕ້ອງຂອງບັນດາ ໄອເອັນຈີໂອ ໄດ້. ດັ່ງນັ້ນ, ຄລກ ໄດ້ສະເໜີຂໍທຶນມາຈັດຕັ້ງປະຕິບັດເອງ, ຊຶ່ງກໍ່ຕົກຢູ່ປະມານ 8 ລ້ານໂດລາສະຫະລັດ ຄິດແລ້ວກໍ່ຫຼຸດອົງການ ແມັກ ທີ່ຂໍຈຳນວນ 16 ລ້ານໂດລາສະຫະລັດ ໃນໄລຍະເວລາ 3 ປີ ເພື່ອເຮັດສຳຫຼວດ.

- ຂໍສະເໜີ: ຖ້າ ຄກລ ຖືກແບ່ງປັນບ້ານແລ້ວ ສຳລັບເຂດສະຫງວນທີ່ບໍ່ໃຫ້ ໄອເອັນຈີໂອ ເຮັດສຳຫຼວດ, ຄກລ